

# SuPER WE Coffee

## ວຽກເດັ່ນຂອງໂຄງການ ທັນວາ 2025 - ກຸມພາ 2026

**ທັນວາ:** ໂຄງການ SuPER WE ໄດ້ຈັດກອງປະຊຸມໃຫຍ່ເພື່ອຮັບຮອງເອົາເອກະສານການສ້າງຕັ້ງ ແລະ ປ່ອນບັດຄັດເລືອກເອົາຄະນະບໍລິຫານງານສະຫະກອນກາເຟພູດອຍດາກຈຶງຢ່າງເປັນທາງການ.

**ມັງກອນ:** ໂຄງການຮ່ວມກັບຄູ່ຮ່ວມງານໄດ້ລົງຕິດຕາມກິດຈະກຳຢູ່ 15 ບ້ານເປົ້າໝາຍ ເພື່ອປະເມີນທັກສະການເປັນຜູ້ນຳຂອງແມ່ຍິງ ແລະ ສົ່ງເສີມວຽກງານຄວາມສະເໝີພາບບົດບາດຍິງ-ຊາຍພາຍໃນຄອບຄົວ.

**ກຸມພາ:** ໂຄງການໄດ້ຈັດຊຸດຝຶກອົບຮົມການປຸງແຕ່ງກາເຟຫຼັງການເກັບກ່ຽວໃຫ້ແກ່ຊາວສວນຈາກ 15 ບ້ານເປົ້າໝາຍ ເພື່ອສ້າງຄວາມເຂັ້ມແຂງດ້ານຄວາມຮູ້ ແລະ ທັກສະໃນການແປຮູບກາເຟທີ່ມີຄຸນນະພາບ.

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400 ຊາວສວນກາເຟ**

280 ແມ່ຍິງຊົນເຜົ່າ

ທາງອ້ອມ

**4,463 ປະຊາຊົນ**

2,217 ແມ່ຍິງຊົນເຜົ່າ

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງ ສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມື ວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ




switchasia · Haliéus · 4FORM · International Cooperative Alliance Asia and Pacific · ITC ILO International Training Centre · FAIRTRADE





ທັນວາ

## ກອງປະຊຸມຂັ້ນວິຊາການກັບຄູ່ຮ່ວມງານ ຂັ້ນແຂວງ ແລະ ຂັ້ນເມືອງ ປະຈຳເດືອນທັນວາ ປີ 2025.

ໃນວັນທີ 8 ຫາ 9 ເດືອນ ທັນວາ ປີ 2025 ທາງໂຄງການ SuPER WE Coffee ແລະ ຄູ່ຮ່ວມງານທາງພາກລັດ ທາງຂັ້ນແຂວງ ແລະ ຂັ້ນເມືອງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 13 ທ່ານ ແລະ ຍິງ 6 ທ່ານ,ກອງປະຊຸມໄດ້ຈັດຂຶ້ນທີ່ຫ້ອງການແຄຣ໌ນານາຊາດປະຈຳແຂວງເຊກອງ ໂດຍຈຸດປະສົງຂອງການປະຊຸມ ເພື່ອລາຍງານຄວາມຄືບໜ້າ ຈຸດດີ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດກິດຈະກຳໃນເດືອນຜ່ານມາ. ຜົນຂອງການປະຊຸມເຫັນວ່າທຸກພາກສວນ ແມ່ນເຫັນດີ ເປັນເອກະພາບ ໃນການລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດກິດຈະກຳໃນເດືອນ ພະຈິກ 2025 ແລະ ຮ່ວມມືກັນຫາວິທີແກ້ໄຂ ບາງຂໍ້ຄົງຄ້າງທີ່ຜ່ານມາ ເພື່ອໃຫ້ຂໍ້ຄົ້ງຄ້າງດັ່ງກ່າວຖືກແກ້ໄຂໃຫ້ມີຜົນສຳເລັດ ພ້ອມດຽວກັນນັ້ນ ຍັງໄດ້ວາງແຜນກິດຈະກຳຮ່ວມກັນ ກັບຜູ້ຮ່ວມງານທາງພາກລັດ ຂັ້ນແຂວງ ແລະ ຂັ້ນເມືອງ ໃນເດືອນ ທັນວາ 2025, ເຮັດໃຫ້ກິດຈະກຳດັ່ງກ່າວ ຖືກນຳໄປຈັດຕັ້ງປະຕິບັດໃຫ້ບັນລຸເປົ້າໝາຍຂອງໂຄງການວາງໄວ້.





ທັນວາ

## ເປີດກອງປະຊຸມໃຫຍ່ ຮັບຮອງເອົາເອກະສານຕ່າງໆໃນການສ້າງຕັ້ງຊະຫະກອນ ແລະ ປ່ອນບັດຄັດເລືອກເອົາຄະນະບໍລິຫານງານສະຫະກອນກາເຟພູດອຍດາກຈຶງ.

ໃນລະຫວ່າງວັນທີ 10 ຫາ 11 ທັນວາ 2025 ທາງໂຄງການ SuPERWE ໄດ້ສົບທົບກັບຄູ່ຮ່ວມງານ ພາກລັດຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ເປີດກອງປະຊຸມໃຫຍ່ ຢູ່ທີ່ຫ້ອງຫານປົກຄອງເມືອງ ເມືອງດາກຈຶງ ແຂວງເຊກອງ, ກອງປະຊຸມໃນຄັ້ງນີ້ ເປັນປະທານໂດຍ ທ່ານ ສົມພອນ ເຈົ້າເມືອງດາກຈຶງ ແລະ ຮ່ວມເປັນປະທານໂດຍ ທ່ານ ຄູນທໍລະນົງ ວັນທານຸວົງ ຫົວໜ້າຫ້ອງການແຄຣ໌ນານາຊາດປະຈຳແຂວງເຊກອງ. ໂດຍມີຜູ້ເຂົ້າຮ່ວມ ຈາກໂຄງການ,ຈາກຄູ່ຮ່ວມງານທາງພາດລັດ ຂັ້ນແຂວງ ແລະ ຂັ້ນເມືອງ, ຫົວໜ້າຫ້ອງການປົກຄອງເມືອງ ແລະ ຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳ ເມືອງພ້ອມດ້ວຍ ຜູ້ຕ່າງໜ້າຈາກ 15 ບ້ານເປົ້າໝາຍຂອງໂຄງການ (ຜູ້ເຂົ້າຮ່ວມທັງໝົດ 74 ທ່ານ ຍິງ 32 ທ່ານ) ໃນກອງປະຊຸມໃນຄັ້ງນີ້ ມີຈຸດປະສົງ ເພື່ອຜ່ານແຜນດຳເນີນງານຂອງສະຫະກອນ,ກົດລະບຽບຕ່າງໆຂອງສະຫະກອນ, ແຜນດຳເນີນໂຫລະກິດຂອງສະຫະກອນ ແລະ ປ່ອນບັດຄັດເລືອກເອົາຄະນະບໍລິຫານງານສະຫະກອນກາເຟພູດອຍດາກຈຶງຢ່າງເປັນທາງການ.





## ທັນວາ

**ຈັດກອງປະຊຸມຈັບຄູ່ທຸລະກິດກາເຟທີ່ເມືອງປາກຊ່ອງ ນະຄອນຈຳປາສັກ.**

ໃນລະຫວ່າງວັນທີ 12 ຫາ 13 ເດືອນທັນວາ ປີ 2025 ທາງໂຄງການ SuPERWE ໄດ້ຈັດປະຊຸມກ່ຽວກັບການຈັບຄູ່ທຸລະກິດກາເຟ ທີ່ຫ້ອງວ່າການເມືອງປາກຊ່ອງ ນະຄອນຈຳປາກສັກ, ໂດຍມີຜູ້ເຂົ້າຮ່ວມຈາກຫຼາຍພາກສວນຄື: ຈາກໂຄງການ, ບໍລິສັດທີ່ປຶກສາ EDC, ສະຫະກອນກາເຟ CPC, ສະມາຄົມກາເຟລາວ, ບໍລິສັດຜະລິດກາເຟເພື່ອສົ່ງອອກ, ສະຫະກອນສະກອນເຊື່ອປາກເຊ, ຮ້ານຂາຍກາເຟ ແລະ ຄະນະບໍລິຫານງານພູດອຍດາກຈຶງ(ຜູ້ເຂົ້າຮ່ວມທັງໝົດ 20 ທ່ານ ຍິງ 6 ທ່ານ. ຈຸດປະສົງ ເພື່ອ ເສີມສ້າງການຮ່ວມມືໃນລະບົບຕ່ອງໂສກາເຟລາວ ໂດຍຜ່ານການແລກປ່ຽນຄວາມຮູ້, ການຊ່ວຍເຫລືອເຊິ່ງກັນ ແລະ ກັນ,ແນະນຳກອງທຶນ ເພື່ອເປັນກົນໄກການສະໜັບສະໜູການລົງທຶນ ແລະ ການສ້າງຄູ່ຮ່ວມພັດທະນາໃນຂະແໜງກາເຟ ແລະ ພ້ອມດຽວກັນນັ້ນ ທາງໂຄງການຍັງໄດ້ພາຄະນະບໍລິຫານສະຫະກອນກາເຟພູດອຍດາກຈຶງລົງໄປພັດຊະນະສຶກສາຢູ່ 2 ສະຖານທີ ທີ່ຂະເຈົ້າຜະລິດກາເຟເພື່ອສົ່ງອອກສູ້ຫາຍໃນ ແລະ ນອກປະເທດ ເຊັ່ນ ສະຫະກອນໃຈກາເຟ ແລະ ສະຫະກອນເກເຟພູພຽງບໍລະເວນ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ ໃນດ້ານວິຊາການຜູ້ຜະລິກາເຟ,ການຕະຫຼາດ ແລະ ການບໍລິຫານກຸ້ມສະຫະກອນທີ່ດີ.






## ມັງກອນ

**ການຝຶກອົບຮົມການປັບປຸງການສື່ສານ.**

ໃນລະຫວ່າງວັນທີ 12 ຫາ 16 ມັງກອນ 2026 ທາງໂຄງການ ແລະ ຄູ່ຮ່ວມງານໄດ້ຈັດຝຶກອົບຮົມປັບປຸງການສື່ສານ ໂດຍມີຜູ້ເຂົ້າຮ່ວມທັງໝົດ 23 ທ່ານ ຍິງ 10 ທ່ານ, ການຝຶກອົບຮົມໃນຄັ້ງນີ້ແມ່ນໄດ້ຈັດຂຶ້ນຫ້ອງການສາທາລະນະສຸກແຂວງເຊກອງ ພ້ອມກັບໄປທັດຊະນະຢູ່ບ້ານລະກາຍ ເມືອງກາລຶມ, ໃນການຝຶກອົບຮົມຜູ້ເຂົ້າຮ່ວມໄດ້ຮຽນຮູ້: ຮຽນຮູ້ການຖ່າຍຮູບດ້ວຍໂທລະສັບສະຫຼາດ: ການວາງກອບ, ການຈັດວາງຮູບພາບ, ແລະ ການຈັດແສງ, ພື້ນຖານການຖ່າຍວິດີໂອແບບປົກຫຸ້ມ ແລະ ການເລົ່າເລື່ອງດ້ວຍຮູບພາບ, ຝຶກຂຽນເລື່ອງລາວກໍລະນີ, ຄຳບັນຍາຍ, ແລະ ໂພສສື່ສັງຄົມເພື່ອການເບິ່ງເຫັນ, ທົບທວນຄືນຄຳແນະນຳການເບິ່ງເຫັນຍີ່ຫໍ້ CARE ແລະ ຜູ້ໃຫ້ທຶນ, ນຳໃຊ້ເຄື່ອງກະຕຸ້ນ ແລະ ເຄື່ອງກະຕຸ້ນເພື່ອຊຸກຍູ້ການມີສ່ວນຮ່ວມ ພ້ອມກັບລົງທັດສະນະບ້ານບ້ານເປົ້າໝາຍຂອງການ ເພື່ອຖ່າຍທຳວິດີໂອ ແລະ ຖ່າຍຮູບພາບຕົວຈິງ ຈາກຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ໃນຕອນທ້າຍການຝຶກອົບຮົມຍັງໄດ້ມີການອອກຄຳຄິດເຫັນ ເພື່ອປັບປຸງການຝຶກອົບຮົມໃນຄັ້ງໜ້າ.

switchasia Haliéus 4FORM coop International Cooperative Alliance Asia and Pacific ITC FAIRTRADE





## ມັງກອນ

### ສຳພາດຂໍ້ມູນການຜະລິດກາເຟ ແລະ ການນຳໃຊ້ນ້ຳ ປີ 2026.

ໃນລະຫວ່າງວັນທີ 19 ຫາ 23 ມັງກອນ 2026 ທາງໂຄງການ ແລະ ຄູ່ຮ່ວມງານຂັ້ນເມືອງ ໄດ້ລົງສຳພາດ ຂໍ້ມູນການຜີລິດກາເຟ ແລະ ການນຳໃຊ້ນ້ຳ ຢູ່ 12 ບ້ານເປົ້າໝາຍ ໃນການສຳພາດແມ່ນເນັ້ນໃສ່ການຜະລິດກາເຟ ແລະ ການນຳໃຊ້ນ້ຳລ້າງກາເຟຂອງຊາວສວນໃນປີ 2026. ຈຸດປະສົງເພື່ອຢາກຮູ້ການຜະລິດກາເຟ ແລະ ການນ້ຳໃຊ້ນ້ຳຂອງຊາວສວນທຸກໆ ບ້ານ ຂະເຈົ້າໄດ້ເຮັດຕາມເຕັກນິກ ຫຼື ບໍ່. ລວມມີຫົວຂໍ້ສຳຄັນຄື: ຜົນຂອງການເກັບກາເຟ ໝາກແດງ ແລະ ການແປຮູບ, ການລ້າງກາເຟ, ການນຳໃຊ້ນ້ຳໃນການແປຮູບກາເຟ,ປະເມີນການປະຢັດນ້ຳ, ສົມທຽບການໃຊ້ເຮືອນຕາກແບບເກົ່າ ແລະ ເຮືອນຕາກແບບໃໝ່.







## ມັງກອນ

### ຕິດຕາມກິດຈະກຳສ້າງຄວາມເຂັ້ມແຂງເພດຍິງເປັນຜູ້ນຳ.

ໃນວັນທີ 27 ຫາ 31 ມັງກອນ 2026 ໂຄງການ SUPER-WE ແລະ ສະຫະພັນແມ່ຍິງເມືອງ ລົງຕິດຕາມກິດຈະກຳການສ້າງຄວາມເຂັ້ມແຂງໃຫ້ຜູ້ຍິງເປັນຜູ້ນຳ ກິດຈຳຈະກຳນີ້ໄດ້ຕິດຕາມຢູ້ ໝົດທັງ 15 ບ້ານເປົ້າໝາຍ ເພື່ອປະເມີນ ທັກສະການເປັນຜູ້ນຳ, ການຂົ້າຮ່ວມການຈັດຕັ້ງພາຍໃນບ້ານ ,ວຽກງານຄວາມສະເໝີພາບບົດບາດຍິງ-ຊາຍພາຍໃນຄອບຄົວ ແລະ ປະເມີນຄວາມຕ້ອງການຂອງແມ່ຍິງດ້ານຂີດຄວາມສາມາດ ແລະ ທັກສະອື່ນໆ.





# ມັງກອນ

**ຕິດຕາມກິດຈະກຳສ້າງເຮືອນຕາກ,ສ້າງເກັບກາເຟ,ການນຳໃຊ້ເຄື່ອງຈັກ,ລະບົບການນຳໃຊ້ນ້ຳໃນເຮືອນອື້ວ, ການເຮັດຝຸ່ນບົ່ມ,ເບ້ຍໄມ້ ແລະ ລະບົບນ້ຳເສຍ.**



ໃນວັນທີ 27 ຫາ 31 ມັງກອນ 2026 ທາງໂຄງການ ແລະ ຄູ່ຮ່ວມງານທາງພາກລັດຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ລົງຕິດຕາມກິດຈະກຳທີໂຄງການໄດ້ສົ່ງເສີມໃນໄລຍະຜ່ານມາ ຈຸດປະສົງແມ່ນເພື່ອຢາກຮູ້ຈຸດດີ ແລະ ຂໍ້ຄົງຄ້າງ ໃນການລົງເບິ່ງພາກສະໜາມໂຕຈິງເຫັນໄດ້ວ່າ ບ້ານທີຕາກກາເຟ ມີ 13 ບ້ານ. ການສ້າງເຮືອນຕາກ ສຳເລັດ 7 ບ້ານ, ການນ້ຳໃຊ້ເຄື່ອງຈັກ 12 ບ້ານ, ການໃຊ້ນ້ຳໃນໂຮງອື້ວ 9 ບ້ານ, ການເຮັດຝຸ່ນບົ່ມມີ 2 ບ້ານ, ເບ້ຍໄມ້ໂດຍສະເລ່ຍແລ້ວ ຍັງປະມານ 25 ຫາ 30 ເປີເຊັນ.





ກຸມພາ

# ກອງປະຊຸມຂັ້ນວິຊາການກັບຄູ່ຮ່ວມງານ ຂັ້ນແຂວງ ແລະ ຂັ້ນເມືອງ ປະຈຳເດືອນກຸມພາ ປີ 2026.



ໃນວັນທີ 3 ຫາ 4 ເດືອນ ກຸມພາ ປີ 2026 ທາງໂຄງການ SuPER WE ແລະ ຄູ່ຮ່ວມງານທາງພາກລັດ ທາງຂັ້ນແຂວງ ແລະ ຂັ້ນເມືອງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 11 ທ່ານ ແລະ ຍິງ 6 ທ່ານ,ກອງປະຊຸມໄດ້ຈັດຂຶ້ນທີ່ຫ້ອງການພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງເຊກອງ ໂດຍຈຸດປະສົງຂອງການປະຊຸມ ເພື່ອລາຍງານຄວາມຄືບໜ້າ ຈຸດດີ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດກິດຈະກຳໃນເດືອນຜ່ານມາ. ຜົນຂອງການປະຊຸມເຫັນວ່າທຸກພາກສວນ ແມ່ນເຫັນດີ ເປັນເອກະພາບ ໃນການລາຍງານໃນການຈັດຕັ້ງປະຕິບັດກິດຈະກຳໃນເດືອນ ທັນວາ 2025 ແລະ ເດືອນມັງກອນປີ 2026, ຮ່ວມມືກັນຫາວິທີແກ້ໄຂ ຂໍ້ຄົງຄ້າງ ເພື່ອໃຫ້ຂໍ້ຄົ້ງຄ້າງດັ່ງກ່າວຖືກແກ້ໄຂໃຫ້ມີຜົນສຳເລັດ ພ້ອມດຽວກັນນັ້ນ ຍັງໄດ້ວາງແຜນກິດຈະກຳຮ່ວມກັນ ກັບຜູ້ຮ່ວມງານທາງພາກລັດ ຂັ້ນແຂວງ ແລະ ຂັ້ນເມືອງ ໃນເດືອນ ມີນາ 2026, ເຮັດໃຫ້ກິດຈະກຳດັ່ງກ່າວ ຖືກນຳໄປຈັດຕັ້ງປະຕິບັດໃຫ້ບັນລຸເປົ້າໝາຍຂອງໂຄງການວາງໄວ້.









## ກຸມພາ

# ຝຶກອົບຮົມຝຶກອົບຮົມການປຸງແຕ່ງກາເຟຫຼັງການເກັບກ່ຽວ.



ໃນລະຫວ່າງວັນທີ 22 ຫາ 28 ກຸມພາ 2026 ໂຄງການ SuPER WE ພ້ອມດ້ວຍຄູ່ຮ່ວມງານພາກລັດຂັ້ນແຂວງ ແລະ ເມືອງ ລົງຝຶກອົບການປຸງແຕ່ງກາເຟຫຼັງການເກັບກ່ຽວ ໃຫ້ຊາວສວນ 15 ບ້ານເປົ້າໝາຍຂອງໂຄງການ ໂດຍມີຜູ້ເຂົ້າຮ່ວມທັງໝົດ 38 ທ່ານ ຍິງ 29 ທ່ານ ການຝຶກອົບຮົມແມ່ນໄດ້ຈັດຂຶ້ນທີ່ບ້ານດາກວໍ ເມືອງດາກຈຶງ, ໂດຍມີຈຸດປະສົງ ໃຫ້ຊາວສວນກາເຟໄດ້ຝຶກອົບຮົມກ່ຽວກັບການແປຮູບຮູບກາເຟ ທີ່ມີຄຸນນະພາບ ຊາວສວນກາເຟຝຶກອົບຮົມກ່ຽວກັບຮູບແບບວິທີການ ແລະ ເຕັກນິກໃນການຄວບຄຸມຄຸນນະພາບທີ່ດີທີ່ສຸດ, ໃນການຝຶກຊາວສວນໄດ້ຮຽນຮູ້: ການເກັບກ່ຽວ, ການຕິດຕາມການໝັກ ແລະ ການລ້າງກາເຟ, ການຄຸ້ມຄອງການຕາກແຫ້ງ ແລະ ການຄວບຄຸມຄຸນນະພາບ, ການແກ້ໄຂບັນຫາທີ່ພົບໃນການຕາກແຫ້ງ, ການທົບທວນບົດຮຽນ ແລະ ການສາທິດການປະຕິບັດຕົວຈິງ, ແລະ ການຊີມລົດຊາດກາເຟ.









# ກຸມພາ

## ກອງປະຊຸມສະຫຼູບລາຍງານໂຄງການໄຍລະຍະ 4 ປີ ແລະ ແຜນ 4 ເດືອນ ທ້າຍໂຄງການ.



ໃນລະຫວ່າງວັນທີ 25 ຫາ 26 ກຸມພາ 2026 ທາງໂຄງການ ແລະ ຄູ່ຮ່ວມງານທາງພາກລັດ ຈາກສູນກາງ, ຂັ້ນແຂວງ ຂັ້ນເມືອງໄດ້ຈັດປະຊຸມສະຫຼູບໂຄງການໄລຍະ 4 ປີ ແລະ ວາງແຜນໄລຍະ 4 ເດືອນ ກອງປະຊຸມໄດ້ຈັດຂຶ້ນທີ່ຫ້ອງການກະສິກຳ ແລະ ສິງແວດລ້ອມແຂວງເຊກອງ, ມີຜູ້ເຂົ້າຮ່ວມທັງໝົດ 26 ທ່ານ ຍິງ 10 ທ່ານ. ເປັນປະທ່ານໂດຍທ່ານ ບຸນສິງ ນາມມະຍົດ ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງເຊກອງ ກອງປະຊຸມຄັ້ງນີ້ມີຈຸດປະສົງ ເພື່ອສະຫຼູບລາຍງານຜົນການຈັດຕັ້ງປະຕິບັດກິດຈະກຳໂຄງການ 8 ເດືອນທ້າຍປີ (ເດືອນກໍລະກົດ 2025-ກຸມພາ2026)ສະຫຼູບລາຍງານຜົນການຈັດຕັ້ງປະຕິບັດກິດຈະກຳໂຄງການໄລຍະ 4 ປີຜ່ານມາ (ສິ້ນສຸດໂຄງການ) ແລະ ປຶກສາຫາລືການຂໍອະນຸມັດຕໍ່ໂຄງການອອກໄປຮອດທ້າຍເດືອນ ມິຖຸນາ 2026. ໃນກອງປະຊຸມຜູ້ເຂົ້າຮ່ວມເຫັນດີເປັນເອກະພາບກັນຕາມບົດລາຍງານ ແລະ ໃນຕອນທ້າຍຂອງກອງປະຊຸມໄດ້ອອກຄຳຄິດເຫັນ ເພື່ອໃຫ້ກອງປະຊຸມໃນຄັ້ງນີ້ໄດ້ນຳໄປປັບໃຊ້ໃນກິດຈະກຳເພື່ອໃຫ້ເກີດປະໂຫຍດ ໃນເຂດບ້ານເປົ້າໝາຍຂອງໂຄງການ.







switchasia · Halieus · 4FORM · coop International Cooperative Alliance Asia and Pacific · ITC · FAIRTRADE



# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານ ເສດຖະກິດໃຫ້ແກ່ຊາວສວນ

**ບັນທຶກ ແລະ ສຳພາດໂດຍ : ພະນິມພອນ ພະອຸທຸມ**

**ນາງ ສອນທະນາ** ໄດ້ແບ່ງປັນວ່າ ການສະໜັບສະໜູນຂອງໂຄງການ ໄດ້ຊ່ວຍປ່ຽນແປງຊີວິດຂອງນາງຈາກທີ່ເຄີຍຂາດຄວາມຮູ້ ແລະ ຕະຫຼາດຮອງຮັບ ມາເປັນການມີລາຍໄດ້ທີ່ໝັ້ນຄົງ. ຜ່ານການຝຶກອົບຮົມເຕັກນິກການປູກ ແລະ ແປຮູບກາເຟ, ຜົນຜະລິດໄດ້ເພີ່ມຂຶ້ນ ແລະ ຂາຍໄດ້ລາຄາດີເປັນກ້ອນ. ສິ່ງສຳຄັນທີ່ສຸດແມ່ນນາງມີຄວາມໝັ້ນໃຈຫຼາຍຂຶ້ນ, ສາມາດຫາເງິນ ແລະ ຕັດສິນໃຈດ້ວຍຕົນເອງ. ນາງຫວັງວ່າໂຄງການຈະສືບຕໍ່ຊ່ວຍພັດທະນາກຸ່ມໃຫ້ເປັນສະຫະກອນຂະໜາດໃຫຍ່ ແລະ ຢາກສົ່ງຕໍ່ຄວາມຮູ້ນີ້ເພື່ອສ້າງຄວາມເຂັ້ມແຂງໃຫ້ແມ່ຍິງຄົນອື່ນໆ.

“**ນັບແຕ່ໂຄງການເຂົ້າມາ ຊີວິດເຮົາປ່ຽນແປງດີຂຶ້ນຫຼາຍ.** ເຮົາຮູ້ສຶກວ່າມີບົດບາດຫຼາຍຂຶ້ນ, ສາມາດຫາເງິນໄດ້ດ້ວຍຕົນເອງ ແລະ ຕັດສິນໃຈເອງໄດ້. ຢາກບອກແມ່ຍິງທຸກຄົນວ່າ ເຮົາຢາກເຜີຍແຜ່ຄວາມຮູ້ເພື່ອໃຫ້ເຂົາພັດທະນາການປູກກາເຟ ແລະ ໃຫ້ມີຄວາມຮູ້ຄວາມສາມາດເທົ່າທຽມກັນ.”



ທ່ານນາງ ສອນທະນາ ຈິກພະບູນ



ທ່ານ ອ່ຽມຄຳ ຈິດດາລາ

**ທ່ານ ອ່ຽມຄຳ** ໄດ້ແບ່ງປັນເຖິງຜົນກະທົບທາງບວກຫຼັງຈາກໂຄງການເຂົ້າມາຊ່ວຍເຫຼືອ. ໃນເມື່ອກ່ອນ ຊາວສວນຂາດເຕັກນິກ ແລະ ຂາຍໄດ້ພຽງກາເຟໝາກແດງໃນລາຄາຕໍ່າ. ປັດຈຸບັນ, ດ້ວຍການສະໜັບສະໜູນອຸປະກອນເຊັ່ນ: ເຄື່ອງສີ ແລະ ເຮືອນຕາກ, ພ້ອມທັງຄວາມຮູ້ໃນການແປຮູບກາເຟໝາກຂາວ, ຊາວສວນສາມາດຂາຍກາເຟໄດ້ເງິນເປັນກ້ອນ ແລະ ມີລາຍຮັບສູງຂຶ້ນທຸກປີ ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນຫຼາຍ. ທ່ານສະເໜີໃຫ້ມີການສືບຕໍ່ໂຄງການ ເພື່ອຍົກລະດັບເຕັກນິກການແປຮູບໃຫ້ທັນສະໄໝ ແລະ ຕອບໂຈດຄວາມຕ້ອງການຂອງຕະຫຼາດ.

“**ນັບແຕ່ໂຄງການເຂົ້າມາ ຊີວິດການເປັນຢູ່ຂອງບ້ານເຮົາກໍສະດວກຫຼາຍຂຶ້ນ,** ເຮົາຮູ້ເຕັກນິກການແປຮູບກາເຟ ແລະ ຂາຍໄດ້ເງິນເປັນກ້ອນ. ຢາກສະເໜີໃຫ້ສືບຕໍ່ໂຄງການໃໝ່ ເພື່ອໃຫ້ມີເຕັກນິກທີ່ສູງຂຶ້ນ ແລະ ແປຮູບກາເຟໄດ້ຕາມລະບົບທັນສະໄໝທີ່ຕະຫຼາດຕ້ອງການ.”

switchasia | Haliéus | 4FORM | coop International Cooperative Alliance Asia and Pacific | ITC | FAIRTRADE

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**

ຫົວໜ້າ ອົງການ

ເບີໂທ: (+856) 20 5564 2235

ອີເມລ: keoamphone.souvannaphoum@care.org

**ທ່ານ ຄຸນທະນົງ ວັນທານຸວົງ**

ຫົວໜ້າ ຫ້ອງການແຂວງ ເຊກອງ

ເບີໂທ: (+856) 20 20 55015147

ອີເມລ: Khounthanong.vanthanouvong@care.org

**ທ່ານ ລີໄຊ ໂພທິສັດ**

ຜູ້ປະສານງານດ້ານການສື່ສານ

ເບີໂທ: (+856) 20 7777 9501

ອີເມລ: Lyxay.phothisut@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org    www.careint.org.la    @careinlaos    CARE International in Lao PDR

care®